**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ໂຮງໝໍແມ່ ແລະ ເດັກເກີດໃໝ່**

ເລກທີ:............/ຮມດ

ນະຄອນຫຼວງວຽງຈັນ, ວັນທີ:..........................

# ຂໍ້ຕົກລົງ
# ຂອງອຳນວຍການໂຮງໝໍແມ່ ແລະ ເດັກເກີດໃໝ່
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກຟື້ນຟູຊີບ

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສາທາລະນະສຸກ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ໂຮງໝໍແມ່ ແລະ ເດັກເກີດໃໝ່ ສະບັບເລກທີ 3559/ສທ, ລົງວັນທີ 12 ທັນວາ 2016;
- ອີງຕາມ ການຕົກລົງເຫັນດີເປັນເອກະພາບຂອງຄະນະອຳນວຍການໂຮງໝໍແມ່ ແລະ ເດັກເກີດໃໝ່.

## ຜູ້ອຳນວຍການໂຮງໝໍແມ່ ແລະ ເດັກເກີດໃໝ່ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກຂອງພະແນກຟື້ນຟູຊີບ-ພັກຟື້ນ ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ແນ່ໃສ່ຈັດຕັ້ງປະຕິບັດວຽກງານ ໃຫ້ການບໍລິການກວດ, ປິ່ນປົວ, ຟື້ນຟູ ຊີບ, ຕິດຕາມຫຼັງຜ່າຕັດປະສູດ-ພະຍາດຍິງ ແລະ ເຮັດການເຊີດຊູກະທັນຫັນ ໃຫ້ມີປະສິດທິພາບ ແລະ ປະສິດທິ ຜົນສູງ;

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ພະແນກຟື້ນຟູຊີບ-ພັກຟື້ນ ສັງກັດໃນໂຄງປະກອບການຈັດຕັ້ງຂອງໂຮງໝໍແມ່ ແລະ ເດັກເກີດໃໝ່ ຢູ່ພາຍ ໃຕ້ການຄຸ້ມຄອງຊີ້ນຳໂດຍກົງຂອງຜູ້ອຳນວຍການໂຮງໝໍ, ມີພາລະບົດບາດເປັນເສນາທິການໃຫ້ແກ່ຜູ້ອຳນວຍການ

ໂຮງໝໍໃນການບໍລິການກວດ, ບົ່ງມະຕິ, ປິ່ນປົວ, ຟື້ນຟູຊີບ, ຕິດຕາມຫຼັງຜ່າຕັດ ແລະ ເຮັດການເຊີດຊູກະທັນຫັນ ຄົນເຈັບທີ່ມີອາການໜັກ, ອາການຮຸນແຮງ ແລະ ມີອາການສົນ; ຄົ້ນຄວ້າເຕັກນິກ-ວິທະຍາສາດການແພດ; ສົ່ງເສີມວຽກງານການຮຽນ-ການສອນ ແລະ ລົງຊ່ວຍໂຮງໝໍຂັ້ນທ້ອງຖິ່ນຍົກລະດັບຄວາມສາມາດດ້ານເຕັກນິກ ວິຊາການ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 3 ໜ້າທີ່

ໜ້າທີ່ຂອງພະແນກຟື້ນຟູຊີບ ມີດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຈັດຕັ້ງຜັນຂະຫຍາຍມະຕິ, ຄໍາສັ່ງຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ລະບຽບການຂອງກະຊວງສາທາລະນະສຸກ ແລະ ຂອງໂຮງໝໍແມ່ ແລະ ເດັກ ກ່ຽວກັບວຽກງານກວດກາ, ບົ່ງມະຕິ, ປິ່ນປົວ, ຟື້ນຟູຊີບ, ຕິດຕາມຫຼັງຜ່າຕັດ ແລະ ເຮັດການເຊີດຊູກະທັນຫັນ;
2. ໃຫ້ການບໍລິການກວດ, ບົ່ງມະຕິ, ປິ່ນປົວ, ຟື້ນຟູຊີບ, ຕິດຕາມຫຼັງຜ່າຕັດ ແລະ ເຮັດການເຊີດຊູກະທັນຫັນ ຄົນເຈັບທີ່ມີອາການໜັກ, ອາການຮຸນແຮງ ແລະ ມີອາການສົນ ທີ່ເຂົ້າມາສຸກເສີນ ຫຼື ນອນປິ່ນປົວຢູ່ພະແນກອື່ນ;
3. ຕິດຕາມອາການຊີວິດຄົນເຈັບ ແລະ ປະເມີນອາການ ພາຍຫຼັງການປິ່ນປົວ, ຟື້ນຟູຊີບ, ຕິດຕາມຫຼັງຜ່າຕັດ ແລະ ເຮັດການເຊີດຊູກະທັນຫັນ ເພື່ອສົ່ງພະແນກວິຊາການກ່ຽວຂ້ອງສືບຕໍ່ປິ່ນປົວ ຕາມການບົ່ງມະຕິ ແລະ ຕາມແຜນການປິ່ນປົວ;
4. ໃຫ້ການປຶກສາຫາລື, ແລກປ່ຽນຄໍາຄິດເຫັນຕໍ່ການກວດ, ບົ່ງມະຕິ, ປິ່ນປົວ, ຟື້ນຟູຊີບ, ຕິດຕາມຫຼັງຜ່າຕັດ ແລະ ເຮັດການເຊີດຊູກະທັນຫັນ ໃນກໍລະນີຄົນເຈັບ ຢູ່ພະແນກອື່ນ;
5. ປະຕິບັດວຽກງານກັນພະຍາດ ແລະ ສົ່ງເສີມສຸຂະພາບ;
6. ຄົ້ນຄວ້າເຕັກນິກ, ວິທະຍາສາດການແພດໃໝ່, ເຜີຍແຜ່ ແລະ ນໍາໃຊ້ຜົນສໍາເລັດດ້ານວິທະຍາສາດ-ເຕັກໂນໂລ ຊີການແພດກ່ຽວກັບວຽກງານການປິ່ນປົວ ຢູ່ພາຍໃນ ແລະ ຕ່າງປະເທດ;
7. ສ້າງແຜນພັດທະນາ ແລະ ປັບປຸງການບໍລິການ ໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ;
8. ສົ່ງເສີມວຽກງານການຮຽນ-ການສອນ (ສິດສອນນັກສຶກສາ ຢູ່ສະຖາບັນການສຶກສາສາທາລະນະສຸກ ແລະ ລົງຝຶກຫັດຕົວຈິງຢູ່ໂຮງໝໍ)
9. ລົງຊ່ວຍໂຮງໝໍຂັ້ນທ້ອງຖິ່ນຍົກລະດັບຄວາມສາມາດດ້ານເຕັກນິກວິຊາການ ກວດ, ບົ່ງມະຕິ, ຜ່າຕັດ, ປິ່ນປົວ, ຟື້ນຟູຊີບ, ຕິດຕາມຫຼັງຜ່າຕັດ ແລະ ເຮັດການເຊີດຊູກະທັນຫັນ ໃຫ້ມີຄຸນນະພາບ ແລະ ປະສິດທິຜົນ;
10. ປະຊຸມແລກປ່ຽນ ແລະ ຖອດຖອນບົດຮຽນປະຈໍາເດືອນ ແລະ ປະຊຸມວິຊາການ ເພື່ອແລກປ່ຽນຄວາມຮູ້ ແລະ ຂໍ້ມູນໃໝ່ ເພື່ອຮັບໃຊ້ເຂົ້າໃນວຽກງານ ກວດ, ບົ່ງມະຕິ, ປິ່ນປົວ, ຟື້ນຟູຊີບ, ຕິດຕາມຫຼັງຜ່າຕັດ ແລະ

ເຮັດການເຊີດຊູກະທັນຫັນ ປະຈຳປີຢ່າງຕໍ່ເນື່ອງ ກັບບັນດາພະແນກ, ບັນດາໂຮງໝໍ, ອົງການຈັດຕັ້ງສາກົນທັງພາຍໃນ ແລະ ຕ່າງປະເທດ;

11. ເກັບກຳ ແລະ ສັງລວມສະຖິຕິຄົນເຈັບທີ່ມາໃຊ້ບໍລິການຢູ່ພະແນກປະຈຳອາທິດ, ປະຈຳເດືອນ;
12. ຂຶ້ນແຜນ, ຄຸ້ມຄອງ ງົບປະມານ, ວັດຖຸອຸປະກອນ, ຢາ, ນ້ຳຢາເຄມີ, ເຄື່ອງມື ແລະ ອຸປະກອນການແພດ ເພື່ອຮັບໃຊ້ໃນການປະຕິບັດວຽກງານຂອງພະແນກ, ກວດກາຄວາມສະອາດ ແລະ ຄວາມເປັນລະບຽບພາຍໃນພະແນກ;
13. ສະຫຼຸບລາຍງານການເຄື່ອນໄຫວວຽກງານຢ່າງເປັນປົກກະຕິ;
14. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ.

**ມາດຕາ 4 ຂອບເຂດສິດ**

ຂອບເຂດສິດຂອງ ພະແນກຟື້ນຟູຊີບ ມີດັ່ງນີ້:

1. ຢັ້ງຢືນຜົນການໃຫ້ບໍລິການກວດ, ບົ່ງມະຕິ, ປິ່ນປົວ, ຟື້ນຟູຊີບ, ຕິດຕາມຫຼັງຜ່າຕັດ ແລະ ເຮັດການເຊີດຊູກະທັນຫັນ;
2. ຕົກລົງບັນຫາລວມຂອງພະແນກ;
3. ແບ່ງວຽກ ແລະ ແບ່ງຄວາມຮັບຜິດຊອບໃຫ້ພະນັກງານຂອງພະແນກ;
4. ຄົ້ນຄວ້າ ແລະ ນຳສະເໜີການກໍ່ສ້າງ, ບຳລຸງ, ຍົກລະດັບ, ປະຕິບັດນະໂຍບາຍ ແລະ ປະຕິບັດວິໄນພະນັກງານທີ່ ຂຶ້ນກັບການຄຸ້ມຄອງຂອງພະແນກ;
5. ສະເໜີຄຳຄິດເຫັນຕໍ່ຄະນະອຳນວຍການໂຮງໝໍກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງພະແນກ;
6. ຢັ້ງຢືນໃຫ້ລາພັກ ຫຼື ບໍ່ໃຫ້ລາພັກ ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງພະແນກ;
7. ເຂົ້າຮ່ວມກອງປະຊຸມ ປຶກສາຫາລື, ປະກອບຄຳຄິດເຫັນ ແລະ ແລກປ່ຽນບົດຮຽນ ທີ່ພົວພັນກັບໜ້າທີ່ ແລະ ຄວາມຮັບຜິດຊອບຂອງພະແນກ ຕາມການມອບໝາຍ;
8. ປະຕິບັດສິດອື່ນໆ ຕາມການມອບໝາຍຂອງຄະນະອຳນວຍການໂຮງໝໍ;

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກຂອງ ພະແນກຟື້ນຟູຊີບ-ພັກຟື້ນ ປະກອບມີ 4 ກຸ່ມວຽກ ຄື:

1. ກຸ່ມວຽກຟື້ນຟູຊີບຄົນເຈັບພະຍາດຍິງ;
2. ກຸ່ມວຽກຟື້ນຟູຊີບຄົນເຈັບປະສູດ;
3. ກຸ່ມວຽກພະຍາບານ;
4. ກຸ່ມວຽກພັກຟື້ນຄົນເຈັບຫຼັງຜ່າຕັດ;

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ໂຄງປະກອບບຸກຄະລາກອນ ຂອງພະແນກຟື້ນຟູຊີບ ປະກອບດ້ວຍ:

1. ຫົວໜ້າພະແນກ ຈຳນວນ 01 ທ່ານ ຮັບຜິດຊອບຕໍ່ ຜູ້ອຳນວຍການ ແລະ ຄະນະອຳນວຍການໂຮງໝໍກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການຈັດຕັ້ງ ແລະ ເຄື່ອນໄຫວວຽກງານ ຂອງພະແນກ.

   ໃນກໍລະນີຕິດຂັດ ຫົວໜ້າພະແນກ ຕ້ອງມອບສິດໃຫ້ຮອງຫົວໜ້າພະແນກທ່ານໃດທ່ານໜຶ່ງເປັນຜູ້ຮັກສາການແທນ;
2. ຮອງຫົວໜ້າພະແນກຈຳນວນໜຶ່ງ ຊ່ວຍຫົວໜ້າພະແນກໃນການຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ ຂອງຫົວໜ້າພະແນກ; ຮັບຜິດຊອບຕໍ່ຫົວໜ້າພະແນກ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ຂອງວຽກງານທີ່ຕົນຊີ້ນຳ.

   ຮອງຫົວໜ້າພະແນກ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານ ທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາແທນນັ້ນໃຫ້ ຫົວໜ້າພະແນກພາຍຫລັງກັບມາປະຈຳການ;
3. ວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

ສຳລັບການບັນຈຸ, ຊັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ກົດລະບຽບທີ່ກຳນົດໄວ້.

## ໝວດທີ 4
## ໜ້າວຽກລະອຽດຂອງແຕ່ລະກຸ່ມວຽກ

**ມາດຕາ 7 ໜ້າວຽກລະອຽດຂອງ ກຸ່ມວຽກຟື້ນຟູຊີບຄົນເຈັບພະຍາດຍິງ**

ໜ້າວຽກລະອຽດ ຂອງກຸ່ມວຽກຟື້ນຟູຊີບຄົນເຈັບພະຍາດຍິງ ມີດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຈັດຕັ້ງຜັນຂະຫຍາຍ ມະຕິ, ຄຳສັ່ງຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ລະບຽບການຂອງກະຊວງສາທາລະນະສຸກ ແລະ ຂອງໂຮງໝໍແມ່ ແລະ ເດັກ ກ່ຽວກັບວຽກງານ ກວດ, ບົ່ງມະຕິ, ປິ່ນປົວ, ຟື້ນຟູຊີບ ແລະ ເຮັດການເຊີດຊູກະທັນຫັນ;
2. ໃຫ້ການບໍລິການກວດ, ບົ່ງມະຕິ, ປິ່ນປົວ, ຟື້ນຟູຊີບ ແລະ ເຮັດການເຊີດຊູກະທັນຫັນ ຄົນເຈັບພະຍາດຍິງທີ່ມີອາການໜັກ, ອາການຮຸນແຮງ ແລະ ມີອາການສົບ ທີ່ເຂົ້າມາສຸກເສີນ ຫຼື ນອນປິ່ນປົວຢູ່ພະແນກອື່ນ;
3. ເຮັດຫັດຖະການເຊັ່ນ: ການໃສ່ເລືອດຫຼັງຜ່າຕັດປົກມົດລູກ, ລູກນອກພົກ, ອານາໄມບາດແຜເປື່ອນ, ເຮັດການເຊີດຊູກະທັນຫັນ CPR ກໍລະນີຫົວໃຈຢຸດເຕັ້ນ, ແທງເສັ້ນເລືອດ Arterial Line, ການໃຊ້ເຄື່ອງຊອ໋ດຫົວໃຈກໍລະນີຢຸດເຕັ້ນ ແລະ ອື່ນໆ.
4. ຕິດຕາມອາການຊີວິດຄົນເຈັບ ແລະ ປະເມີນອາການ ພາຍຫຼັງການປິ່ນປົວ, ຟື້ນຟູຊີບ ແລະ ເຮັດການເຊີດຊູກະທັນຫັນ ເພື່ອສົ່ງພະແນກວິຊາການກ່ຽວຂ້ອງສືບຕໍ່ປິ່ນປົວ ຕາມການບົ່ງມະຕິ ແລະ ຕາມແຜນການປິ່ນປົວ;

5. ໃຫ້ການປຶກສາຫາລື, ແລກປ່ຽນຄຳຄິດເຫັນຕໍ່ການກວດ, ບົ່ງມະຕິ, ປິ່ນປົວ, ຟື້ນຟູຊີບ ແລະ ເຮັດການເຊີດຊູກະທັນຫັນ ໃນກໍລະນີຄົນເຈັບຢູ່ພະແນກອື່ນ;
6. ປະຕິບັດວຽກງານກັນພະຍາດ ແລະ ສົ່ງເສີມສຸຂະພາບ;
7. ຄົ້ນຄວ້າເຕັກນິກ, ວິທະຍາສາດການແພດໃໝ່, ເຜີຍແຜ່ ແລະ ນຳໃຊ້ຜົນສຳເລັດດ້ານວິທະຍາສາດ-ເຕັກໂນໂລຊີການແພດກ່ຽວກັບວຽກງານການປິ່ນປົວ ຢູ່ພາຍໃນ ແລະ ຕ່າງປະເທດ;
8. ສ້າງແຜນພັດທະນາ ແລະ ປັບປຸງການບໍລິການ ໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ;
9. ສົ່ງເສີມວຽກງານການຮຽນ-ການສອນ (ສິດສອນນັກສຶກສາ ຢູ່ສະຖານການສຶກສາສາທາລະນະສຸກ ແລະ ລົງຝຶກຫັດຕົວຈິງຢູ່ໂຮງໝໍ);
10. ລົງຊ່ວຍໂຮງໝໍຂັ້ນທ້ອງຖິ່ນຍົກລະດັບຄວາມສາມາດດ້ານເຕັກນິກວິຊາການ ກວດ, ບົ່ງມະຕິ, ປິ່ນປົວ, ຟື້ນຟູຊີບ ແລະ ເຮັດການເຊີດຊູກະທັນຫັນ ໃຫ້ມີຄຸນນະພາບ ແລະ ປະສິດທິຜົນ;
11. ປະຊຸມແລກປ່ຽນ ແລະ ຖອດຖອນບົດຮຽນປະຈຳເດືອນ ແລະ ປະຊຸມວິຊາການ ເພື່ອແລກປ່ຽນຄວາມຮູ້ ແລະ ຂໍ້ມູນໃໝ່ ເພື່ອຮັບໃຊ້ເຂົ້າໃນວຽກງານ ກວດ, ບົ່ງມະຕິ, ປິ່ນປົວ, ຟື້ນຟູຊີບ, ແລະ ເຮັດການເຊີດຊູກະທັນຫັນ ປະຈຳປີຢ່າງຕໍ່ເນື່ອງ ກັບບັນດາພະແນກ, ບັນດາໂຮງໝໍ, ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ;
12. ສະຫຼຸບລາຍງານການເຄື່ອນໄຫວວຽກງານ ຢ່າງເປັນປົກກະຕິ;
13. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ;

**ມາດຕາ 8 ໜ້າວຽກລະອຽດຂອງ ກຸ່ມວຽກຟື້ນຟູຊີບຄົນເຈັບປະສູດ**

ໜ້າວຽກລະອຽດ ຂອງກຸ່ມວຽກຟື້ນຟູຊີບຄົນເຈັບປະສູດ ມີດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຈັດຕັ້ງຜັນຂະຫຍາຍ ມະຕິ, ຄຳສັ່ງຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ລະບຽບການຂອງກະຊວງສາທາລະນະສຸກ ແລະ ຂອງໂຮງໝໍແມ່ ແລະ ເດັກ ກ່ຽວກັບວຽກງານ ກວດ, ບົ່ງມະຕິ, ປິ່ນປົວ, ຟື້ນຟູຊີບ ແລະ ເຮັດການເຊີດຊູກະທັນຫັນ;
2. ໃຫ້ການບໍລິການ ກວດ, ບົ່ງມະຕິ, ປິ່ນປົວ, ຟື້ນຟູຊີບ ແລະ ເຮັດການເຊີດຊູກະທັນຫັນ ຄົນເຈັບປະສູດ ທີ່ມີອາການໜັກ, ອາການຮຸນແຮງ ແລະ ມີອາການສົນ ທີ່ເຂົ້າມາສຸກເສີນ ຫຼື ນອນປິ່ນປົວຢູ່ພະແນກອື່ນ;
3. ເຮັດຫັດຖະການເຊັ່ນ: ແທງເສັ້ນເລືອດ Arterial line ໃຫ້ຄົນເຈັບຖືພາ ມີພາວະປອດບວມນໍ້າ, CPR ໃນແມ່ຍິງຖືກພາ, ການແຍ່ທໍ່ຄໍ ແລະ ການໃສ່ເຄື່ອງຊ່ວຍຫາຍໃຈໃຫ້ຄົນເຈັບຊັກບໍ່ຮູ້ສະຕິ ແລະ ອື່ນໆ.
4. ຕິດຕາມອາການຊີວິດຄົນເຈັບ ແລະ ປະເມີນອາການ ພາຍຫຼັງການປິ່ນປົວ, ຟື້ນຟູຊີບ ແລະ ເຮັດການເຊີດຊູກະທັນຫັນ ເພື່ອສົ່ງພະແນກວິຊາການກ່ຽວຂ້ອງສືບຕໍ່ປິ່ນປົວ ຕາມການບົ່ງມະຕິ ແລະ ຕາມແຜນການປິ່ນປົວ;
5. ໃຫ້ການປຶກສາຫາລື, ແລກປ່ຽນຄຳຄິດເຫັນຕໍ່ການ ກວດ, ບົ່ງມະຕິ, ປິ່ນປົວ, ຟື້ນຟູຊີບ ແລະ ເຮັດການເຊີດຊູກະທັນຫັນ ໃນກໍລະນີຄົນເຈັບຢູ່ພະແນກອື່ນ;
6. ປະຕິບັດວຽກງານກັນພະຍາດ ແລະ ສົ່ງເສີມສຸຂະພາບ;

7. ຄົ້ນຄວ້າເຕັກນິກ, ວິທະຍາສາດການແພດໃໝ່, ເຜີຍແຜ່ ແລະ ນຳໃຊ້ຜົນສຳເລັດດ້ານວິທະຍາສາດ-ເຕັກໂນໂລຊີການແພດກ່ຽວກັບວຽກງານການປິ່ນປົວ ຢູ່ພາຍໃນ ແລະ ຕ່າງປະເທດ;
8. ສ້າງແຜນພັດທະນາ ແລະ ປັບປຸງການບໍລິການ ໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ;
9. ສົ່ງເສີມວຽກງານການຮຽນ-ການສອນ (ສິດສອນນັກສຶກສາ ຢູ່ສະຖາບັນການສຶກສາສາທາລະນະສຸກ ແລະ ລົງຝຶກຫັດຕົວຈິງຢູ່ໂຮງໝໍ);
10. ລົງຊ່ວຍໂຮງໝໍຂັ້ນທ້ອງຖິ່ນຍົກລະດັບຄວາມສາມາດດ້ານເຕັກນິກວິຊາການ ກວດ, ບົ່ງມະຕິ, ຜ່າຕັດ, ປິ່ນປົວ, ຟື້ນຊີບ ແລະ ເຮັດການເຊີດຊູກະທັນຫັນ ໃຫ້ມີຄຸນນະພາບ ແລະ ປະສິດທິຜົນ;
11. ປະຊຸມແລກປ່ຽນ ແລະ ຖອດຖອນບົດຮຽນປະຈຳເດືອນ ແລະ ປະຊຸມວິຊາການ ເພື່ອແລກປ່ຽນຄວາມຮູ້ ແລະ ຂໍ້ມູນໃໝ່ ເພື່ອຮັບໃຊ້ເຂົ້າໃນວຽກງານກວດ, ບົ່ງມະຕິ, ປິ່ນປົວ, ຟື້ນຟູຊີບ ແລະ ເຮັດການເຊີດຊູກະທັນຫັນ ປະຈຳປີຢ່າງຕໍ່ເນື່ອງ ກັບບັນດາພະແນກ, ບັນດາໂຮງໝໍ, ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ;
12. ສະຫຼຸບລາຍງານການເຄື່ອນໄຫວວຽກງານ ຢ່າງເປັນປົກກະຕິ;
13. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 9 ໜ້າວຽກລະອຽດຂອງກຸ່ມວຽກພະຍາບານ**

ໜ້າວຽກລະອຽດ ຂອງກຸ່ມວຽກພະຍາບານ ມີດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຈັດຕັ້ງຜັນຂະຫຍາຍ ມະຕິ, ຄຳສັ່ງຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ລະບຽບການຂອງກະຊວງສາທາລະນະສຸກ ແລະ ຂອງໂຮງໝໍແມ່ ແລະ ເດັກເກີດໃໝ່ ກ່ຽວກັບວຽກງານໃຫ້ບໍລິການພະຍາບານ;
2. ຮັບຕ້ອນຄົນເຈັບ, ສອບຖາມຂໍ້ມູນ, ປະເມີນອາການເວລາຮັບຄົນເຈັບຈາກພະແນກອື່ນ;
3. ຊ່ວຍທ່ານໝໍໃນການກວດ, ບົ່ງມະຕິ ແລະ ປິ່ນປົວ ຄົນເຈັບທີ່ຕ້ອງຟື້ນຟູຊີບ ເຊັ່ນ: ຕິດຕາມອາການ, ບັນທຶກການປິ່ນປົວ, ສັກຢາ, ສິ່ງນໍ້າເຂົ້າ-ອອກ ຕາມຄຳແນະນຳຂອງທ່ານໝໍ ແລະ ເຮັດຫັດຖະການຕາມແຜນການປິ່ນປົວ
4. ຊ່ວຍທ່ານໝໍ ໃນການຟື້ນຟູຊີບ ແລະ ເຮັດການເຊີດຊູກະທັນຫັນຄົນເຈັບເຊັ່ນ ມີພາວະຫົວໃຈຢຸດເຕັ້ນ, ມີພາວະອັນຕະລາຍຕໍ່ຊີວິດຄົນເຈັບ ເຊັ່ນ : ການໃສ່ເລືອດກໍລະນີຕົກເລືອດຫຼັງເກີດທຳມະຊາດ-ຜ່າຕັດ, ການອານາໄມຄົນເຈັບເປັນແຜຕຽງ, ການດູດຂີ້ສະເລດ ແລະ ກາຍະບຳບັດ ຕ່າງໆ;
5. ຊ່ວຍທ່ານໝໍ ຕິດຕາມອາການ, ເອົາອາການຊີວິດ ພາຍຫຼັງຟື້ນຟູຊີບ ແລະ ເຮັດການເຊີດຊູກະທັນຫັນ ກ່ອນສົ່ງໃຫ້ພະແນກວິຊາສະເພາະທີ່ກ່ຽວຂ້ອງສືບຕໍ່ປິ່ນປົວ ຕາມການບົ່ງມະຕິ ແລະ ຕາມແຜນການປິ່ນປົວ;
6. ອະນາໄມ-ທຳຄວາມສະອາດຫ້ອງນອນ, ຕຽງນອນ, ອຸປະກອນຕ່າງໆ, ນຳສິ່ງເຄື່ອງມື ແລະ ອຸປະກອນການແພດ ໄປອະເຊື້ອຕາມຫຼັກການ;
7. ປະຕິບັດວຽກງານກັນພະຍາດ ແລະ ສົ່ງເສີມສຸຂະພາບ;
8. ຄົ້ນຄວ້າເຕັກນິກ, ວິທະຍາສາດການແພດໃໝ່, ເຜີຍແຜ່ ແລະ ນຳໃຊ້ຜົນສຳເລັດດ້ານວິທະຍາສາດ-ເຕັກໂນໂລຊີການພະຍາບານ ຢູ່ພາຍໃນ ແລະ ຕ່າງປະເທດ;
9. ສ້າງແຜນພັດທະນາ ແລະ ປັບປຸງການບໍລິການ ໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ;

10. ສົ່ງເສີມວຽກງານການຮຽນ-ການສອນ (ສິດສອນນັກສຶກສາ ຢູ່ສະຖານການສຶກສາສາທາລະນະສຸກ ແລະ ລົງຝຶກຫັດຕົວຈິງຢູ່ໂຮງໝໍ)
11. ລົງຊ່ວຍໂຮງໝໍຂັ້ນທ້ອງຖິ່ນຍົກລະດັບຄວາມສາມາດດ້ານເຕັກນິກວິຊາການພະຍາບານ ໃຫ້ມີຄຸນນະພາບ ແລະ ປະສິດທິຜົນ;
12. ປະຊຸມແລກປ່ຽນ ແລະ ຖອດຖອນບົດຮຽນປະຈໍາເດືອນ ແລະ ປະຊຸມວິຊາການ ເພື່ອແລກປ່ຽນຄວາມຮູ້ ແລະ ຂໍ້ມູນໃໝ່ ເພື່ອຮັບໃຊ້ເຂົ້າໃນວຽກງານການພະຍາບານ ປະຈໍາປີຢ່າງຕໍ່ເນື່ອງ ກັບບັນດາພະແນກ, ບັນດາໂຮງໝໍ, ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ;
13. ເກັບກໍາ ແລະ ສັງລວມສະຖິຕິຄົນເຈັບທີ່ມາໃຊ້ບໍລິການຢູ່ພະແນກ ປະຈໍາອາທິດ, ປະຈໍາເດືອນ;
14. ຂຶ້ນແຜນ, ຄຸ້ມຄອງ ງົບປະມານ, ວັດຖຸອຸປະກອນ, ຢາ, ນໍ້າຢາເຄມີ, ເຄື່ອງມື ແລະ ອຸປະກອນການແພດ ເພື່ອຮັບໃຊ້ໃນການປະຕິບັດວຽກງານຂອງພະແນກ, ກວດກາຄວາມສະອາດ ແລະ ຄວາມເປັນລະບຽບ ພາຍໃນພະແນກ;
15. ສະຫຼຸບລາຍງານການເຄື່ອນໄຫວວຽກງານຢ່າງເປັນປົກກະຕິ;
16. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ.

**ມາດຕາ 10 ໜ້າວຽກລະອຽດຂອງກຸ່ມວຽກພັກຟື້ນຫຼັງຜ່າຕັດ**

ໜ້າວຽກລະອຽດ ຂອງກຸ່ມວຽກພັກຟື້ນຫຼັງຜ່າຕັດ ມີດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຈັດຕັ້ງຜັນຂະຫຍາຍມະຕິ, ຄໍາສັ່ງຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ລະບຽບການຂອງກະຊວງສາທາລະນະສຸກ ແລະ ຂອງໂຮງໝໍແມ່ ແລະ ເດັກ ກ່ຽວກັບວຽກງານ ກວດ, ບົ່ງມະຕິ, ປິ່ນປົວ, ຕິດຕາມຫຼັງຜ່າຕັດປະສູດ-ພະຍາດຍິງ ແລະ ເຮັດການເຊີດຊູກະທັນຫັນ;
2. ໃຫ້ການບໍລິການກວດ, ບົ່ງມະຕິ, ປິ່ນປົວ, ຕິດຕາມຫຼັງຜ່າຕັດ ແລະ ເຮັດການເຊີດຊູກະທັນຫັນ ຄົນເຈັບປະສູດ-ພະຍາດຍິງ ທີ່ມີອາການໜັກ, ອາການຮຸນແຮງ ແລະ ມີອາການສົນທີ່ເຂົ້າມາສຸກເສີນ ຫຼື ນອນປິ່ນປົວຢູ່ພະແນກອື່ນ;
3. ເຮັດຫັດຖະການເຊັ່ນ: ແທງເສັ້ນເລືອດດໍາ ໃຫ້ຄົນເຈັບຫຼັງຜ່າຕັດທີ່ຕ້ອງເຊີດຊູກະທັນຫັນ: ເປີດເສັ້ນໃສ່ເລືອດ, ການແຍ່ຍ່ຽວ, ການໃສ່ເຄື່ອງທໍາຄວາມອຸ່ນ, ການຕິດຕາມອາການຊີວິດຕ່າງໆ, ຕິດຕາມອາການສົນຫຼັງຜ່າຕັດ, ຕິດຕາມການປັ້ນຂອງມົດລູກຢ່າງໃກ້ຊິດ, ການບັນທຶກເອກະສານຕ່າງໆ, ການສຸຂະສຶກສາຄົນເຈັບໃນໄລຍະພັກຟື້ນ, ການຄຸ້ມຄອງທາງເດີນຫາຍໃຈ ແລະ ການໃສ່ເຄື່ອງຊ່ວຍຫາຍໃຈໃຫ້ຄົນເຈັບຊັກບໍ່ຮູ້ສະຕິ ແລະ ອື່ນໆ.
4. ໃຫ້ການປຶກສາຫາລື, ແລກປ່ຽນຄໍາຄິດເຫັນຕໍ່ການກວດ, ບົ່ງມະຕິ, ປິ່ນປົວ, ຕິດຕາມຫຼັງຜ່າຕັດ ແລະ ເຮັດການເຊີດຊູກະທັນຫັນ ໃນກໍລະນີຄົນເຈັບຢູ່ພະແນກອື່ນ;
5. ຄົ້ນຄວ້າເຕັກນິກ, ວິທະຍາສາດການແພດໃໝ່, ເຜີຍແຜ່ ແລະ ນໍາໃຊ້ຜົນສໍາເລັດດ້ານວິທະຍາສາດ-ເຕັກໂນໂລຊີການແພດກ່ຽວກັບວຽກງານການປິ່ນປົວ ຢູ່ພາຍໃນ ແລະ ຕ່າງປະເທດ;
6. ສ້າງແຜນພັດທະນາ ແລະ ປັບປຸງການບໍລິການ ໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ;
7. ສົ່ງເສີມວຽກງານການຮຽນ-ການສອນ (ສິດສອນນັກສຶກສາ ຢູ່ສະຖານການສຶກສາສາທາລະນະສຸກ ແລະ ລົງຝຶກຫັດຕົວຈິງຢູ່ໂຮງໝໍ);

8. ລົງຊ່ວຍໂຮງໝໍຂັ້ນທ້ອງຖິ່ນຍົກລະດັບຄວາມສາມາດດ້ານເຕັກນິກວິຊາການ ກວດ, ບົ່ງມະຕິ, ປິ່ນປົວ, ຕິດຕາມຫຼັງຜ່າຕັດ ແລະ ເຮັດການເຊີດຊູກະທັນຫັນ ໃຫ້ມີຄຸນນະພາບ ແລະ ປະສິດທິຜົນ;
9. ປະຊຸມແລກປ່ຽນ ແລະ ຖອດຖອນບົດຮຽນປະຈຳເດືອນ ແລະ ປະຊຸມວິຊາການ ເພື່ອແລກປ່ຽນຄວາມຮູ້ ແລະ ຂໍ້ມູນໃໝ່ ເພື່ອຮັບໃຊ້ເຂົ້າໃນວຽກງານກວດ, ບົ່ງມະຕິ, ປິ່ນປົວ, ຕິດຕາມຫຼັງຜ່າຕັດ ແລະ ເຮັດການເຊີດຊູກະທັນຫັນ ປະຈຳປີຢ່າງຕໍ່ເນື່ອງ ກັບບັນດາພະແນກ, ບັນດາໂຮງໝໍ, ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ;
10. ສະຫຼຸບລາຍງານການເຄື່ອນໄຫວວຽກງານ ຢ່າງເປັນປົກກະຕິ;
11. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 11 ຫຼັກການ

ພະແນກຟື້ນຟູຊີບ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ໂດຍມີການສົມທົບລະຫວ່າງຄວາມຮັບຜິດຊອບຂອງໝູ່ຄະນະ ກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ;
2. ປະຕິບັດລະບອບຫົວໜ້າດຽວຕາມການແບ່ງຂັ້ນຄຸ້ມຄອງ ແລະ ບົນພື້ນຖານມີການແບ່ງງານກັນຢ່າງຈະແຈ້ງໃນໝູ່ຄະນະ ແລະ ທຸກຂັ້ນ ພ້ອມທັງມອບສິດ ແລະ ຄວາມຮັບຜິດຊອບ ໃຫ້ສົມເຫດສົມຜົນໃນການຕັດສິນບັນຫາພາຍໃນຂອບເຂດຂອງແຕ່ລະຂັ້ນ ແລະ ແຕ່ລະຄົນ.

### ມາດຕາ 12 ແບບແຜນວິທີເຮັດວຽກ

ພະແນກຟື້ນຟູຊີບ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ທຸກການເຄື່ອນໄຫວວຽກງານ ຂອງພະແນກແມ່ນອີງໃສ່ຫຼັກການ ແລະ ລະບຽບການຂອງໂຮງໝໍ;
2. ເຮັດວຽກຢ່າງມີ ແຜນການ, ແຜນງານ ແລະ ໂຄງການລະອຽດ; ມີການປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງຢ່າງແໜ້ນແຟ້ນ; ແກ້ໄຂຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
3. ປະຕິບັດລະບອບປະຊຸມ, ສ່ອງແສງ, ລາຍງານປະຈຳເດືອນ, ປະຈຳໄຕຣມາດ ແລະ ປະຈຳປີ ແລະ ກອງປະຊຸມວິຊາການຕ່າງໆ ເພື່ອຊຸກຍູ້ຕິດຕາມ ແລະ ກວດກາປະເມີນຜົນ, ເກັບກຳສະພາບລວມ ແລະ ສະເພາະດ້ານ ຈາກທຸກຂົງເຂດວຽກງານ ແລະ ສັງລວມລາຍງານໃຫ້ຂັ້ນເທິງ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 13 ງົບປະມານ**

ພະແນກຟື້ນຟູຊີບ ມີງົບປະມານ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການຕາມການຈັດສັນ-ແບ່ງປັນ ແລະ ຕາມການອະນຸມັດຂອງຄະນະອໍານວຍການ.

**ມາດຕາ 14 ການຈັດຕັ້ງປະຕິບັດ**

ພະແນກຟື້ນຟູຊີບ ບັນດາພະແນກພາຍໃນໂຮງໝໍ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 15 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຜູ້ອໍານວຍການໂຮງໝໍແມ່ ແລະ ເດັກເກີດໃໝ່**